# ທະນາຄານແຫ່ງ ສປປ ລາວໃຫ້ການຊ່ວຍເຫລືອແກ່ເມືອງ ແລະ ກຳລັງປະກອບອາວຸດ



ຫວ່າງບໍ່ດົນຜ່ານມານີ້ທະນາຄານແຫ່ງ ສປປ ລາວ ກໍ່ໄດ້ນຳເອົານ້ຳໃຈແຫ່ງໄມຕີຈິດມິດຕະພາບຂອງຄະນະພັກ-ຄະນະນຳ, ອົງການຈັດຕັ້ງມະຫາຊົນ ແລະ ພະນັກງານທະນາຄານ ແຫ່ງ ສປປ ລາວ ມາສູ່ຄະນະພັກ-ຄະນະປົກຄອງ ແລະ ຊາວເມືອງຫີນເຫີບທີ່ພວມກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ອົງຄະນະພັກຂອງເມືອງດັ່ງກ່າວເຊິ່ງນຳໂດຍທ່ານ ຄຳວົງ ທິບພະວົງ ຄະນະພັກທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມຈັດຕັ້ງ-ພະນັກງານ ທຫລ ເຊິ່ງນຳເອົາວັດຖຸສິ່ງຂອງທີ່ໄດ້ມາຈາກການປະກອບສ່ວນຂອງອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆທີ່ມີມູນຄ່າຈຳນວນ 37,140,000 ກີບ, ພ້ອມເງິນສົດຈຳນວນໜຶ່ງທີ່ໄດ້ມາຈາກບັນດາທະນາຄານທຸລະກິດລັດຮຸ້ນສ່ວນ ທີ່ໄດ້ຮ່ວມຄະນະມາໃນຄັ້ງນີ້, ມອບໃຫ້ແກ່ທ່ານ ຈັນແສງ ດວງພະຈັນ ເຈົ້າເມືອງ ເມືອງຫີນເຫີບ ແຂວງວຽງຈັນ ມີພະນັກງານທັງສອງຝ່າຍເຂົ້າຮ່ວມ. ໃນໂອກາດນີ້ ທ່ານ ຄຳວົງ ທິບພະວົງ ກໍ່ໄດ້ຕາງໜ້າຄະນະພັກ-ຄະນະນຳທະນາຄານ ແຫ່ງ ສປປ ລາວ ກ່າວສະແດງຄວາມຮູ້ບຸນຄຸນຄວາມສາມັກຄີອັນໃຫຍ່ຫລວງມາສູ່ຄະນະນຳຂອງເມືອງດັ່ງກ່າວ ຈາກນັ້ນຄະນະນຳພ້ອມດ້ວຍພະນັກງານທັງສອງຝ່າຍກໍ່ໄດ້ແຂ່ງຂັນກິລາມິດຕະພາບເພື່ອຮັດແໜ້ນຄວາມສາມັກຄີ ທີ່ເຄີຍມີມູນເຊື້ອມາແລ້ວນັ້ນໃຫ້ຈະເລີນງອກງາມຍິ່ງໆຂຶ້ນ.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 30/11/2009

ໃນໄລຍະດຽວກັນນັ້ນ ທ່ານ ມິ່ງແກ້ວ ສຸວັດດີ ຮອງຫົວໜ້າຫ້ອງການທະນາຄານ ແຫ່ງ ສປປ ລາວ ກໍ່ນຳເອົາເຄື່ອງໃຊ້ຫ້ອງການ ຈຳນວນໜຶ່ງມອບໃຫ້ແກ່ຕຶກພິເສດ (ພະແນກ ປິ່ນປົວການນຳຂັ້ນສູງຂອງພັກ-ລັດ ແລະ ນາຍທະຫານຊັ້ນສູງ) ເຄື່ອງຈຳນວນດັ່ງກ່າວມີ ເຄື່ອງຄອມພິວເຕີ 1 ຊຸດ ມູນຄ່າ 12,900,000 ກ່ວາກີບ ໂດຍແມ່ນ ທ່ານ ພັນເອກ ດຣ. ນາງ ສົມສະຫວາດ ສິດທິເດດ ຫົວໜ້າການເມືອງໂຮງໝໍ 103 ກອງທັບເປັນຜູ້ຮັບ ຈາກນັ້ນ ທ່ານ ມິ່ງແກ້ວ ສຸວັດດີ ແລະ ທ່ານ ພັນເອກ ດຣ. ນາງ ສົມສະຫວາດ ສິດທິເດດ ກໍ່ໄດ້ຜັດ ປ່ຽນກັນສະແດງຄວາມຮູ້ສຶກກ່ຽວກັບຜົນງານອັນມະຫັດສະຈັນ ຂອງກອງທັບໃນຕະຫລອດ60 ປີ ຜ່ານມາ ແລະ ຈະພ້ອມກັນສືບຕໍ່ຮັດແໜ້ນສາຍສຳພັນໃຫ້ແຕກດອກອອກຜົນຜຂື້ນເລື້ອຍໆ.

ໃນກາງເດືອນພະຈິກ 2009 ທ່ານ ມິ່ງແກ້ວ ສຸວັດດີ ຮອງຫົວໜ້າຫ້ອງການທະນາ ຄານ ແຫ່ງ ສປປ ລາວ ພ້ອມອົງການຈັດຕັ້ງມະຫາຊົນກໍ່ໄດ້ພ້ອມກັນເຂົ້າຢ້ຽມຢາມຖາມຂ່າວ ຄະນະພັກ-ຄະນະນຳ, ບັນດາຄູອາຈານ ແລະ ນັກສຶກສາວິທະຍາຄານປ້ອງກັນຄວາມສະ ຫງົບແຫ່ງຊາດ (ວປສ) ແລະ ກໍ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກຄະນະນຳ ວປສ ແລະ ພ້ອມດຽວກັນນີ້ ທະນາຄານແຫ່ງ ສປປ ລາວ ໄດ້ນຳເອົາເຄື່ອງຄອມພິວເຕີ 5 ຊຸດມູນຄ່າ 32,148,500 ກີບ ມອບໃຫ້ແກ່ ທ່ານ ພັນໂທ ດຣ ບຸນກອງ ພຸດທິຈັກ ຄະນະພັກ-ຄະນະ ອຳນວຍການ ວປສ ເພື່ອເປັນການປະກອບສ່ວນເຂົ້າໃນການຄົ້ນຄ້ວາສຶກສາຮ່ຳຮຽນຂອງ ວປສ ແລະທັງເປັນການປະກອບສ່ວນເຂົ້າໃນພາລະກິດຮັບໃຊ້ງານມະຫາກຳກິລາຊີເກມຄັ້ງທີ 25.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 30/11/2009